ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງຈຳປາສັກ

ເລກທີ...758.../ຈຂ.ຈສ

ແຂວງຈຳປາສັກ, ວັນທີ...31.../...7.../2018.

# ຂໍ້ຕົກລົງ

## ວ່າດ້ວຍການຮັບຮອງຫົວໜ່ວຍ ລາຄາທົດແທນຄ່າທີ່ດິນ ແລະ ຊັບສິນ ທີ່ຖືກຜົນກະທົບ ຈາກການກໍ່ສ້າງ ແລວສາຍສົ່ງ ໄຟຟ້າແຮງສູງ 230 kV ຂອງໂຄງການເຂື່ອນໄຟຟ້າ ດອນສະໂຮງ, ເມືອງໂຂງ, ແຂວງຈຳປາສັກ

- ອີງຕາມກົດໝາຍ ວ່າດ້ວຍການປົກຄອງທ້ອງຖິ່ນ ສະບັບເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015.
- ອີງຕາມກົດໝາຍ ວ່າດ້ວຍການປົກປັກຮັກສາສິ່ງແວດລ້ອມ ສະບັບເລກທີ 29/ສພຊ, ລົງວັນທີ 18 ທັນວາ 2012.
- ອີງຕາມດຳລັດສະບັບເລກທີ 84/ລບ, ລົງວັນທີ 5 ເມສາ 2016 ວ່າດ້ວຍການທົດແທນຄ່າເສຍຫາຍ ແລະ ການຈັດສັນຍົກຍ້າຍປະຊາຊົນ ຈາກໂຄງການພັດທະນາ.
- ອີງຕາມບົດບັນທຶກກອງປະຊຸມ ກ່ຽວກັບການຄົ້ນຄວ້າ ແລະ ກຳນົດຫົວໜ່ວຍ ລາຄາທົດແທນຄ່າເສຍຫາຍ ທີ່ຖືກກະທົບຈາກ ການກໍ່ສ້າງແລວສາຍສົ່ງໄຟຟ້າ 230 kV ຂອງໂຄງການເຂື່ອນໄຟຟ້າ ດອນສະໂຮງ ຄັ້ງວັນທີ 13 ມິຖຸນາ 2018 ຢູ່ທີ່ຫ້ອງວ່າການປົກຄອງເມືອງໂຂງ, ແຂວງຈຳປາສັກ.

**ເຈົ້າແຂວງຈຳປາສັກ ອອກຂໍ້ຕົກລົງ:**

ມາດຕາ 01 ຈຸດປະສົງ.

ເພື່ອກຳນົດລາຄາ ຫົວໜ່ວຍທົດແທນຄ່າເສຍຫາຍຕໍ່ຊັບສິນຂອງ ບຸກຄົນ, ນິຕິບຸກຄົນ ທີ່ໄດ້ຮັບຜົນກະທົບຈາກ ການກໍ່ສ້າງແລວສາຍສົ່ງ ໄຟຟ້າແຮງສູງ 230 kV ຂອງໂຄງການເຂື່ອນໄຟຟ້າ ດອນສະໂຮງ, ເມືອງໂຂງ, ແຂວງຈຳປາສັກ.

ມາດຕາ 02 ຂອບເຂດການນຳໃຊ້.

ຂໍ້ຕົກລົງສະບັບນີ້ ນຳໃຊ້ສະເພາະເຂດທີ່ໄດ້ຮັບຜົນກະທົບຈາກ ການກໍ່ສ້າງແລວສາຍສົ່ງໄຟຟ້າແຮງສູງ 230 kV ແຕ່ເຂື່ອນໄຟຟ້າ ດອນສະໂຮງ ຫາສະຖານີໄຟຟ້າບ້ານຫາດ, ເມືອງໂຂງ, ແຂວງຈຳປາສັກ.

ມາດຕາ 03 ອະທິບາຍສັບ.

1. ເຈົ້າຂອງໂຄງການ ໝາຍເຖິງ: ບໍລິສັດ ໄຟຟ້າດອນສະໂຮງ (DSPC).
2. ຜູ້ໄດ້ຮັບຜົນກະທົບ ໝາຍເຖິງ: ເຈົ້າຂອງທີ່ດິນ ແລະ ຊັບສິນ ທີ່ໄດ້ຮັບຜົນເສຍຫາຍ ຈາກການກໍ່ສ້າງແລວສາຍສົ່ງ.
3. ຊັບສິນ ໝາຍເຖິງ: ວັດຖຸ-ສິ່ງຂອງ ທີ່ເປັນກຳມະສິດຂອງ ບຸກຄົນ, ນິຕິບຸກຄົນ, ອົງການຈັດຕັ້ງ (ຕົ້ນໄມ້, ເຄື່ອງປູກ, ສິ່ງປຸກສ້າງ, ຄອກສັດ, ຫຼັກຮົ້ວ, ໜາມໜາກຈັບ, ຄັນນາ, ໜອງປາແລະ ອື່ນໆ).
4. ທີ່ດິນລວມບ້ານ ໝາຍເຖິງ: ທີ່ດິນທີ່ບ້ານ ໄດ້ນຳໃຊ້ແລ້ວໃນວຽກລວມຂອງ ບ້ານ ເຊັ່ນ: ທີ່ດິນປ່າຊ້າ, ທີ່ດິນໂຮງຮຽນ, ທີ່ດິນວັດ ແລະ ອື່ນໆ.

ມາດຕາ 04 ຕົກລົງລາຄາຫົວໜ່ວຍ ທົດແທນຄ່າເສຍຫາຍ ທີ່ຖືກຜົນກະທົບ, ເຊິ່ງມີລາຍລະອຽດດັ່ງລຸ່ມນີ້:

1. ການຄິດໄລ່ລາຄາຫົວໜ່ວຍປະເພດທີ່ດິນ.

| ປະເພດ | | ເຂດນອກເທດສະບານເມືອງ | | | |
|---|---|---|---|---|---|
| | | ປະເພດກະທົບທາງກົງ (ຕົ້ນເສົາ) | | ປະເພດກະທົບທາງອ້ອມ (ກ້ອງແລວສາຍສົ່ງ) | |
| | | ຫົວໜ່ວຍ | ລາຄາ(ກີບ) | ຫົວໜ່ວຍ | ລາຄາ(ກີບ) |
| ທີ່ດິນປຸກສ້າງ | ຕິດທາງຢາງ | 1 ມ$^2$ | 25,000 | 1 ມ$^2$ | 25,000 |
| | ຕິດທາງດິນແດງ | 1 ມ$^2$ | 23,000 | 1 ມ$^2$ | 23,000 |
| | ບໍ່ຕິດທາງ | 1 ມ$^2$ | 21.000 | 1 ມ$^2$ | 21,000 |
| ທີ່ດິນນານ້ຳຝົນ | | 1 ມ$^2$ | 7000 | 1 ມ$^2$ | 700 |
| ທີ່ດິນນາເຮື້ອ | | 1 ມ$^2$ | 3,000 | 1 ມ$^2$ | 300 |
| ທີ່ດິນສວນ | ຕິດທາງຢາງ | 1 ມ$^2$ | 5,000 | 1 ມ$^2$ | 500 |
| | ຕິດທາງດິນແດງ | 1 ມ$^2$ | 4,000 | 1 ມ$^2$ | 400 |
| | ບໍ່ຕິດທາງ | 1 ມ$^2$ | 3,000 | 1 ມ$^2$ | 300 |
| ທີ່ດິນຈັບຈອງ (ທີ່ດິນຫົວໄຮ່ປ່າຍນາ/ທີ່ດິນລວມບ້ານໂຄກ) | ຕິດທາງຢາງ | 1 ມ$^2$ | 3,600 | 1 ມ$^2$ | 360 |
| | ຕິດທາງດິນແດງ | 1 ມ$^2$ | 2,400 | 1 ມ$^2$ | 240 |
| | ບໍ່ຕິດທາງ | 1 ມ$^2$ | 1,200 | 1 ມ$^2$ | 120 |
| ທີ່ດິນລວມບ້ານ | | 1 ມ$^2$ | 1000 | 1 ມ$^2$ | 100 |
| ທີ່ດິນສວນຢາງເຮື້ອ | | 1 ມ$^2$ | 2,000 | 1 ມ$^2$ | 200 |

2. **ລາຄາທົດແທນໄມ້ໃຫ້ໝາກ.**

| ລ/ດ | ປະເພດ | ຕົ້ນນ້ອຍ(ກີບ/ຕົ້ນ) ເກນອາຍຸ 3 ປີລົງມາ | ຕົ້ນກາງ (ກີບ/ຕົ້ນ) ເກນອາຍຸ 3-10 ປີ | | ຕົ້ນໃຫຍ່ (ກີບ/ຕົ້ນ) ເກນອາຍຸ 10 ປີຂຶ້ນໄປ | |
|---|---|---|---|---|---|---|
| | | ຕົ້ນນ້ອຍ (ກີບ/ຕົ້ນ) | ຕົ້ນກາງ (ກີບ/ຕົ້ນ) | ຄູນ 6 ປີ | ຕົ້ນໃຫຍ່ (ກີບ/ຕົ້ນ) | ຄູນ 6 ປີ |
| 1 | ຕົ້ນຂີ້ຫູດ | 10,000 | 62,500 | **375,000** | 125,000 | **750,000** |
| 2 | ຕົ້ນຕານ | 10,000 | 62,500 | **375,000** | 125,000 | **750,000** |
| 3 | ຕົ້ນໝາກກ່ອງ | 20,000 | 50,000 | **300,000** | 100,000 | **600,000** |
| 4 | ຕົ້ນໝາກກ້ວຍ | 10,000 | 15,000 | | | |
| 5 | ຕົ້ນໝາກກ້ຽງ | 20,000 | 50,000 | **300,000** | 100,000 | **600,000** |
| 6 | ຕົ້ນໝາກກອກ | 10,000 | 62,500 | **375,000** | 125,000 | **750,000** |
| 7 | ຕົ້ນໝາກກະສັງ | 20,000 | 50,000 | **300,000** | 100,000 | **600,000** |
| 8 | ຕົ້ນໝາກຂາມ | 20,000 | 90,000 | **540,000** | 150,000 | **900,000** |
| 9 | ຕົ້ນໝາກຂຽບ | 20,000 | 25,000 | **150,000** | 30,000 | **180,000** |
| 10 | ຕົ້ນໝາກສີດາ | 20,000 | 25,000 | **150,000** | 50,000 | **300,000** |
| 11 | ຕົ້ນໝາກລິ້ນເວີ | 20,000 | 35,000 | **210,000** | 75,000 | **450,000** |

| | | | | | | |
|---|---|---|---|---|---|---|
| 12 | ຕົ້ນໝາກຍົມ | 20,000 | 25,000 | **150,000** | 30,000 | **180,000** |
| 13 | ຕົ້ນໝາກນ້ຳນົມ | 20,000 | 30,000 | **180,000** | 40,000 | **240,000** |
| 14 | ຕົ້ນໝາກນາວ | 20,000 | 35,000 | **210,000** | 75,000 | **450,000** |
| 15 | ຕົ້ນໝາກພ້າວ | 20,000 | 62,500 | **375,000** | 125,000 | **750,000** |
| 16 | ຕົ້ນໝາກມ່ວງ | 20,000 | 75,000 | **450,000** | 150,000 | **900,000** |
| 17 | ຕົ້ນໝາກມ່ວງຫິມະພານ | 20,000 | 60,000 | **360,000** | 120,000 | **720,000** |
| 18 | ຕົ້ນໝາກມີ້ | 15,000 | 37,500 | **225,000** | 75,000 | **450,000** |
| 19 | ຕົ້ນໝາກລິ້ນໄມ້ | 5,000 | 25,000 | **150,000** | 30,000 | **180,000** |
| 20 | ຕົ້ນໝາກລຳໄຍ | 20,000 | 35,000 | **210,000** | 75,000 | **450,000** |
| 21 | ຕົ້ນໝາກຫຸ່ງ | 20,000 | 30,000 | **180,000** | 50,000 | **300,000** |
| 22 | ຕົ້ນໝາກຄໍ້ສົ້ມ | 10,000 | 50,000 | **300,000** | 100,000 | **600,000** |
| 23 | ຕົ້ນໝາກງີ້ວ | 20,000 | 50,000 | **300,000** | 100,000 | **600,000** |
| 24 | ຕົ້ນສີສຽດ | 10,000 | 15,000 | **90,000** | 25,000 | **150,000** |
| 25 | ໝາກພິລາ | 10,000 | 20,000 | **120,000** | 30,000 | **180,000** |
| 26 | ຕົ້ນໝາກໄຟ | 20,000 | 80,000 | **480,000** | 120,000 | **720,000** |
| 27 | ໝາກເງາະ | 20,000 | 80,000 | **480,000** | 120,000 | **720,000** |
| 28 | ຕົ້ນໝາກ | 10,000 | 15,000 | **90,000** | 25,000 | **150,000** |
| 29 | ຕົ້ນໝາກໄຂ່ | 15,000 | 50,000 | **300,000** | 100,000 | **600,000** |
| 30 | ໝາກກະທັນ | 20,000 | 50,000 | **300,000** | 100,000 | **600,000** |

3. ລາຄາທົດແທນໄມ້ອຸດສະຫະກຳ (ໄມ້ປູກ).

| ລ/ດ | ປະເພດໄມ້ | ຂະໜາດໜ້າຕັດ (ຊັງຕີແມັດ) | ລາຄາ (ກີບ/ຕົ້ນ) |
|---|---|---|---|
| 1 | ໄມ້ສັກ, ໄມ້ດູ່, ແຕ້ຄ່າ, ໄມ້ແດງ, ໄມ້ແຄນ, ໄມ້ຂະຍຸງ, ໄມ້ວິກ/ໄມ້ກະຖິນນະລົງ, ໄມ້ປະດົງ, ໄມ້ຍາງ | <20 | 25,000 |
| | | 20-40 | 50,000 |
| | | >40 | 100,000 |
| 2 | ໄມ້ເກດສະໜາ | <1 ປີ | 30,000 |
| | | 1-6 ປີ | 60,000 |
| | | >6ປີ | 90,000 |
| 3 | ໄມ້ດູ່ລາຍ | <1 ປີ | 50,000 |
| | | 1-6 ປີ | 150,000 |
| | | >6ປີ | 300,000 |

4. ລາຄາທົດແທນໄມ້ປ້ອງ.

| ລ/ດ | ປະເພດໄມ້ | ຫົວໜ່ວຍ/ລາຄາ |
|---|---|---|
| 1 | ໄມ້ຊ່າງໄຜ່ | 5.000 ກີບ/ລຳ |
| 2 | ໄມ້ໄຜ່ບ້ານ | 15.000 ກີບ/ລຳ |
| 3 | ອ້ອຍ | 5,000 ກີບ/ລຳ |

5. ລາຄາທົດແທນພືດອາຍຸສັ້ນ (ພືດລົ້ມລຸກ).

| ລ/ດ | ປະເພດ | ອັດຕາການທົດແທນ(ກີບ/ຕົ້ນ) |
|---|---|---|
| 1 | ໝາກເຜັດ | 5,000 |
| 2 | ໝາກເຂືອ | 5,000 |
| 3 | ໝາກງາ | 1,700 |

6. ລາຄາທົດແທນຊັບສິນອື່ນໆ

| ລ/ດ | ລາຍການ | ຫົວໜ່ວຍ | ລາຄາ (ກີບ) | ໝາຍເຫດ |
|---|---|---|---|---|
| 1 | ຫຼັກຮົ້ວຊີມັງ | ຫຼັກ | 20,000 | ລວມທັງຄ່າແຮງງານຕ່າງໆ (*ສຳລັບ ຄັນນາ ແມ່ນຈະຕ້ອງໄດ້ທົດແທນໄປແຕ່ລະຄັ້ງຖ້າມີການຖຸດ*) |
| 2 | ຫຼັກຮົ້ວໄມ້ | ຫຼັກ | 10,000 | |
| 3 | ໜາມໝາກຈັບ | ໂຕ້ງ | 65,000 | |
| 4 | ຄັນນາ | ແມັດ | 10,000 | |

ມາດຕາ 05 ການທົດແທນສິ່ງປຸກສ້າງອື່ນໆ ເຊັ່ນ: ຖຽງນາ, ເລົ້າເຂົ້າ, ຄອກສັດ ແລະ ອື່ນໆ ແມ່ນປະຕິບັດດັ່ງນີ້.

ກ) ຊັບສິນທີ່ຍົກຍ້າຍໄດ້ ແມ່ນໃຫ້ທົດແທນຄ່າແຮງງານ ໃນການຍົກຍ້າຍຕາມການຕົກລົງເຫັນດີຂອງເຈົ້າຂອງ ຊັບສິນ ແລະ ເຈົ້າຂອງ ໂຄງການ, ຖ້າເປັນຈຳນວນຫຼາຍ ທີ່ບໍ່ສາມາດຕົກລົງກັນໄດ້ ແມ່ນໃຫ້ຄະນະກຳມະການ ລົງປະເມີນຕົວຈິງ ແລ້ວທົດແທນຕາມຄວາມເໝາະສົມ.

ຂ) ຖ້າເປັນຊັບສິນ ທີ່ຍົກຍ້າຍບໍ່ໄດ້ ແມ່ນໃຫ້ທົດແທນຄ່າເສຍຫາຍ ໂດຍໃຫ້ຄະນະກຳມະການ ລົງປະເມີນຕົວຈິງ ແລ້ວທົດແທນຕາມຄວາມເໝາະສົມ.

ມາດຕາ 06 ການກຳນົດເຂດສະຫງວນກ້ອງແລວສາຍສົ່ງ.

ສຳລັບທີ່ດິນທີ່ຖືກຜົນກະທົບ ກ້ອງແລວສາຍສົ່ງ ໃນໄລຍະຄວາມກ້ວາງ 35 ແມັດ ຫຼື ຂ້າງລະ 17,5 ແມັດ ແຕ່ຈຸດໃຈກາງແລວ ແມ່ນກຳນົດເປັນຂອບເຂດສະຫງວນ, ເຂດຫວງຫ້າມ ຕາມເຕັກນິກໄຟຟ້າລາວວາງອອກ ແມ່ນບໍ່ໃຫ້ມີການນຳໃຊ້ ປຸກສ້າງ, ປຸກຝັງພືດ, ຕົ້ນໄມ້ອື່ນໆ, ຖ້າມີຄວາມຈຳເປັນ ຫຼື ຕ້ອງທຳການຜະລິດຂອງ ປະຊາຊົນ ແມ່ນອະນຸຍາດໃຫ້ປູກໃສ່ ແຕ່ບໍ່ໃຫ້ມີຄວາມສູງເກີນ 3 ແມັດ.

ມາດຕາ 07 ການຈັດຕັ້ງປະຕິບັດ

ບັນດາບ້ານ, ກຸ່ມບ້ານ, ເມືອງ, ແຂວງ, ຄະນະກຳມະການຍົກຍ້າຍ-ຈັດສັນ ແລະ ຟື້ນຟູຊີວິດການເປັນຢູ່ຂອງປະຊາຊົນ ໂຄງການເຂື່ອນໄຟຟ້າດອນສະໂຮງ (ຄຍຈຟ), ເຈົ້າຂອງໂຄງການ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດ ຕາມຂໍ້ຕົກລົງສະບັບນີ້ ໃຫ້ໄດ້ຮັບຜົນດີ.

**ມາດຕາ 08** ມອບໃຫ້ຄະນະກຳມະການ ທີ່ກ່ຽວຂ້ອງຂັ້ນຕ່າງໆ ແລະ ຄະນະກຳມະການຍົກຍ້າຍ-ຈັດສັນ ແລະ ຟື້ນຟູຊີວິດການເປັນຢູ່ຂອງປະຊາຊົນ ໂຄງການເຂື່ອນໄຟຟ້າດອນສະໂຮງ (ຄຍຈຟ) ປະສານສົມທົບ ກັບເຈົ້າຂອງໂຄງການ ກໍ່ສ້າງເຂື່ອນໄຟຟ້ານ້ຳຕົກ ດອນສະໂຮງ, ເມືອງໂຂງ, ແຂວງຈຳປາສັກ ພ້ອມກັບຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 09** ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ແລະ ນຳໃຊ້ໄດ້ ນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ເຈົ້າແຂວງ**

ແຂວງຈຳປາສັກ
ເຈົ້າແຂວງ

ປອ. ບຸນທອງ ດີວິໄຊ